1114 /ຖວທ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນ ສປປ ລາວ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມສື່ມວນຊົນ

2023

## ສາລະບານ

ໝວດທີ 1 .......... 1
ບົດບັນຍັດທົ່ວໄປ .......... 1
ມາດຕາ 1 ຈຸດປະສົງ .......... 1
ມາດຕາ 2 ໂທລະພາບ .......... 1
ມາດຕາ 3 ໂທລະພາບໃຊ້ສາຍ .......... 2
ມາດຕາ 4 ໂທລະພາບບໍ່ໃຊ້ສາຍ .......... 2
ມາດຕາ 5 ການອະທິບາຍຄໍາສັບ .......... 2
ມາດຕາ 6 ຂອບເຂດການນໍາໃຊ້ຂໍ້ຕົກລົງ .......... 3
ໝວດທີ 2 .......... 3
ປະເພດ ແລະ ການຈັດຜັງຊ່ອງລາຍການ .......... 3
ມາດຕາ 7 ປະເພດຂອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ .......... 3
ມາດຕາ 8 ໂທລະພາບຜ່ານສາຍໂກອັກຊຽນ .......... 3
ມາດຕາ 9 ໂທລະພາບຜ່ານສາຍໄຍແກ້ວນໍາແສງ .......... 3
ມາດຕາ 10 ໂທລະພາບຜ່ານອິນເຕີເນັດ .......... 4
ມາດຕາ 11 ໂທລະພາບກະຈາຍພາກພື້ນດິນດ້ວຍລະບົບດີຈິຕອນ .......... 4
ມາດຕາ 12 ໂທລະພາບຜ່ານດາວທຽມ .......... 4
ມາດຕາ 13 ການຈັດຜັງຊ່ອງລາຍການ .......... 4
ໝວດທີ 3 .......... 4
ການຄຸ້ມຄອງ ແລະ ນໍາໃຊ້ ຊ່ອງ ແລະ ຄື້ນ ລາຍການ .......... 4
ມາດຕາ 14 ການນໍາເຂົ້າ ຊ່ອງລາຍການ .......... 4
ມາດຕາ 15 ຂັ້ນຕອນການນໍາໃຊ້ຊ່ອງ ຫຼື ຄື້ນ ລາຍການ .......... 5
ມາດຕາ 16 ການຄຸ້ມຄອງຊ່ອງລາຍການ .......... 5
ມາດຕາ 17 ການສົ່ງ ແລະ ກະຈາຍ ຊ່ອງ ແລະ ຄື້ນ ລາຍການ. .......... 5
ມາດຕາ 18 ການຖ່າຍທອດສັນຍານລາຍການພິເສດ .......... 5
ໝວດທີ 4 .......... 6
ການສ້າງຕັ້ງທຸລະກິດບໍລິການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ .......... 6
ມາດຕາ 19 ທຸລະກິດໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ .......... 6
ມາດຕາ 20 ການຂໍອະນຸຍາດສ້າງຕັ້ງດໍາເນີນທຸລະກິດ ບໍລິການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ .......... 6
ມາດຕາ 21 ມາດຕະຖານເຕັກນິກ .......... 6
ມາດຕາ 22 ຂອບເຂດ ຄື້ນຄວາມຖີ່ ກໍາລັງແຮງສົ່ງ ແລະ ລັດສະໝີສາຍສົ່ງ .......... 6

ມາດຕາ 23 ເງື່ອນໄຂການສ້າງຕັ້ງສະຖານີ ແລະ ດຳເນີນທຸລະກິດ .......... 7
ມາດຕາ 24 ການເຄື່ອນໄຫວທຸລະກິດພາຍຫຼັງໄດ້ຮັບໃບອະນຸຍາດ .......... 7
ໝວດທີ 5 .......... 7
ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖານີ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ .......... 7
ມາດຕາ 25 ໂຄງປະກອບການຈັດຕັ້ງ .......... 7
ມາດຕາ 26 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ .......... 8
ມາດຕາ 27 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ .......... 8
ມາດຕາ 28 ສິດ ແລະ ໜ້າທີ່ ຮອງຜູ້ອຳນວຍການ .......... 9
ມາດຕາ 29 ສິດ ແລະ ໜ້າທີ່ ຂອງນັກວິຊາການ .......... 9
ມາດຕາ 30 ການຂະຫຍາຍສາຂາ .......... 10
ມາດຕາ 31 ໂອນກຳມະສິດໃຫ້ບຸກຄົນອື່ນ .......... 10
ໝວດທີ 6 .......... 10
ຂໍ້ຫ້າມ .......... 10
ມາດຕາ 32 ຂໍ້ຫ້າມສຳລັບ ຜູ້ປະກອບກິດຈະການ .......... 10
ມາດຕາ 33 ຂໍ້ຫ້າມທົ່ວໄປ .......... 10
ໝວດທີ 7 .......... 11
ການຄຸ້ມຄອງ ແລະ ກວດກາ .......... 11
ມາດຕາ 34 ອົງການຄຸ້ມຄອງ .......... 11
ມາດຕາ 35 ສິດ ແລະ ໜ້າທີ່ຂອງກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ .......... 11
ມາດຕາ 36 ສິດ ແລະ ໜ້າທີ່ຂອງ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ .......... 11
ມາດຕາ 37 ສິດ ແລະ ໜ້າທີ່ຂອງ ຫ້ອງການຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ .......... 12
ໝວດທີ 8 .......... 13
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ .......... 13
ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ. .......... 13
ມາດຕາ 39 ມາດຕະການຕໍ່ຜູ້ລະເມີດມີດັ່ງນີ້. .......... 13
ໝວດທີ 9 .......... 14
ບົດບັນຍັດສຸດທ້າຍ .......... 14
ມາດຕາ 40 ການຈັດຕັ້ງປະຕິບັດ .......... 14
ມາດຕາ 41 ຜົນສັກສິດ .......... 14

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດທະນະຖາວອນ**

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ** **ເລກທີ:114/ຖວທ**

**ນະຄອນຫຼວງວຽງຈັນ,ວັນທີ:** 15 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ສະບັບເລກທີ 01/ສພຊ, ລົງວັນທີ 04 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ໜັງສືສະເໜີຂອງກົມສື່ມວນຊົນສະບັບເລກທີ 546/ສມຊ, ລົງວັນທີ 16 ພະຈິກ 2022.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ, ມາດຕະການ ໃນການຄຸ້ມຄອງ ການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍໃນ ສປປ ລາວ ຊຶ່ງເຮັດໜ້າທີ່ບໍລິການ ຮັບ ແລະ ສົ່ງ ສັນຍານ ຊ່ອງ ແລະ ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸ ພາຍໃນປະເທດ ໃຫ້ມີຄຸນນະພາບ, ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

### ມາດຕາ 2 ໂທລະພາບ

ໂທລະພາບ ແມ່ນການກະຈາຍ ສຽງ ແລະ ພາບ ທາງໄກ ດ້ວຍຄື້ນຄວາມຖີ່ການກະຈາຍສະເພາະ ຊຶ່ງການກະຈາຍຄື້ນຄວາມຖີ່ດັ່ງກ່າວນັ້ນປະກອບດ້ວຍ ລະບົບ ເຄື່ອງສົ່ງ ແລະ ເຄື່ອງຮັບສັນຍານສຳລັບຜູ້ຊົມ ຊຶ່ງເອີ້ນວ່າ "ໜ່ວຍໂທລະພາບ".

**ມາດຕາ 3 ໂທລະພາບໃຊ້ສາຍ**

ໂທລະພາບໃຊ້ສາຍ ແມ່ນລະບົບການສົ່ງລາຍການໂທລະພາບ ແລະ ລາຍການວິທະຍຸ ແບບກະແສຄື້ນໄຟຟ້າ ຜ່ານສາຍນຳສັນຍານ ໂກອັກຊຽນ (Coaxial) ຫຼື ສາຍໃຍແກ້ວນຳແສງ (Fiber Optics) ໄປຫາຜູ້ຊົມທີ່ເປັນສະມາຊິກ.

**ມາດຕາ 4 ໂທລະພາບບໍ່ໃຊ້ສາຍ**

ໂທລະພາບບໍ່ໃຊ້ສາຍ ແມ່ນລະບົບການສົ່ງລາຍການໂທລະພາບ ແລະ ລາຍການວິທະຍຸ ແບບກະແສຄື້ນໄຟຟ້າ ທີ່ມີຄື້ນຄວາມຖີ່ການກະຈາຍສະເພາະ ໄປຫາຜູ້ຊົມທີ່ເປັນສະມາຊິກ.

**ມາດຕາ 5 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຜູ້ປະກອບກິດຈະການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຮ່ວມກັນເຮັດທຸລະກິດ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຕາມການຕົກລົງເຫັນດີອະນຸມັດ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

2. **ການບໍລິການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ** ໝາຍເຖິງ ການສົ່ງ, ການກະຈາຍ ຊ່ອງ ແລະ ຄື້ນ ສັນຍານ ລາຍການໂທລະພາບ ແລະ ລາຍການວິທະຍຸ ທີ່ໄດ້ຮັບອະນຸຍາດ ໄປໃຫ້ຜູ້ຊົມ ແລະ ຜູ້ຟັງ ທີ່ເປັນສະມາຊິກ.

3. **ຜູ້ເປັນສະມາຊິກ** ໝາຍເຖິງ ບຸກຄົນທີ່ຊົມ ແລະ ຟັງ ລາຍການໂທລະພາບ ແລະ ລາຍການວິທະຍຸ ຈາກການບໍລິການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໂດຍມີເງື່ອນໄຂ ຈ່າຍ ແລະ ບໍ່ຈ່າຍຄ່າບໍລິການ.

4. **ສະຖານີໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ** ໝາຍເຖິງສະຖານທີ່ ປະກອບດ້ວຍ ອາຄານ, ເຄື່ອງສົ່ງ ແລະ ອຸປະກອນເຕັກນິກ, ຜູ້ບໍລິຫານ, ຄະນະບັນນາທິການ ແລະ ນັກວິຊາການຕ່າງໆ.

5. **ອຸປະກອນຮັບສັນຍານໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ** ໝາຍເຖິງ ອຸປະກອນເອເລັກໂຕຣນິກ ໃຊ້ຮັບສັນຍານ ພາບ ແລະ ສຽງ ຂອງລາຍການ ວິທະຍຸ ແລະ ໂທລະພາບ ທີ່ກະຈາຍ ຜ່ານທາງ ສາຍນຳສັນຍານ, ອາກາດພາກພື້ນດິນ ແລະ ກະຈາຍຜ່ານດາວທຽມ.

6. **ຊ່ອງໂທລະພາບ** ໝາຍເຖິງ ຂອບເຂດຄື້ນຄວາມຖີ່ ທີ່ກຳນົດໂດຍ ອົງການໂທລະຄົມມະນາຄົມສາກົນ (ITU) ສຳລັບການກະຈາຍສັນຍານ ພາບ ແລະ ສຽງ.

7. **ຜັງຊ່ອງລາຍການ** ໝາຍເຖິງ ບັນຊີຊ່ອງລາຍການໂທລະພາບ ແລະ ບັນຊີຄື້ນລາຍການວິທະຍຸທີ່ໄດ້ຮັບອະນຸຍາດເຜີຍແຜ່ຈາກອົງການຄຸ້ມຄອງສື່ມວນຊົນຂັ້ນສູນກາງ;

8. **ຊ່ອງປົກກະຕິ** ໝາຍເຖິງຊ່ອງ ແລະ ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸ ຕ່າງໆ ໃນຜັງຊ່ອງລາຍການ;

9. **ລາຍການປົກກະຕິ** ໝາຍເຖິງ ລາຍການໂທລະພາບ ແລະ ລາຍການວິທະຍຸ ທີ່ອອກອາກາດປະຈຳວັນໃນຊ່ອງ ແລະ ຄື້ນ ຕາມຜັງຊ່ອງລາຍການ;

10. **ລາຍການພິເສດ** ໝາຍເຖິງ ລາຍການທີ່ອອກອາກາດແບບບໍ່ປົກກະຕິ, ເກີດຂຶ້ນ ຈາກການສະເໜີຂອງ ຜູ້ປະກອບກິດຈະການ, ການຊີ້ນຳອົງການຄຸ້ມຄອງທີ່ກ່ຽວຂ້ອງ ແລະ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຊົມ ແລະ ຜູ້ຟັງ.

**11. ສາຍໂກອັກຊຽນ** ( Coaxial Cable ) ໝາຍເຖິງສາຍສົ່ງ ຫຼື ຮັບສັນຍານ ສ່ວນໃຫ່ຍຈະເອີ້ນສັ້ນໆ ວ່າສາຍໂກອັກ ( Coax ) ຈະມີຕົວນຳໄຟຟ້າຢູ່ 2 ສ່ວນ ຄຳວ່າໂກອັກ ມີຄວາມໝາຍວ່າ " ມີແກນຮ່ວມກັນ "

**12. ແອບປລີເຄເຊີນ** (Application) ໝາຍເຖິງ ຊອບແວ ຫຼື ລະບົບຄຳສັ່ງດ້ານກະແສໄຟຟ້າທີ່ຖືກອອກແບບມາເພື່ອປະຕິບັດໜ້າທີ່ສະເພາະ ເຈາະຈົງ ໂດຍກົງ ສຳລັບຜູ້ໃຊ້ ຫຼື ໃນບາງກໍລະນີສຳລັບໂຄງການອື່ນ. ແອບປລີເຄເຊີນ ມີຊື່ເອີ້ນແບບສັ້ນວ່າ "ແອບ"(App)

### ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະການຄຸ້ມຄອງການເຄື່ອນໄຫວຂອງການປະກອບກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນຂອບເຂດດິນແດນຂອງ ສປປ ລາວ

## ໝວດທີ 2
## ປະເພດ ແລະ ການຈັດຜັງຊ່ອງລາຍການ

### ມາດຕາ 7 ປະເພດຂອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ

**ປະເພດໂທລະພາບໃຊ້ສາຍ ປະກອບມີດັ່ງນີ້:**

1. ໂທລະພາບຜ່ານສາຍໂກອັກຊຽນ(Coaxial);
2. ໂທລະພາບຜ່ານສາຍໄຍແກ້ວນຳແສງ(Fiber Optics);
3. ໂທລະພາບອິນເຕີເນັດ IPTV (Internet Protocol TV).

**ປະເພດໂທລະພາບບໍ່ໃຊ້ສາຍ ປະກອບມີດັ່ງນີ້:**

1. ໂທລະພາບກະຈາຍພາກພື້ນດິນດ້ວຍລະບົບດີຈີຕອນ(Digital TV);
2. ໂທລະພາບຜ່ານດາວທຽມ(Direct To Home);
3. ໂທລະພາບອິນເຕີເນັດ IPTV (Internet Protocol TV)ແລະ ອື່ນໆ...

### ມາດຕາ 8 ໂທລະພາບຜ່ານສາຍໂກອັກຊຽນ

ໂທລະພາບຜ່ານສາຍໂກອັກຊຽນ ແມ່ນລະບົບການສົ່ງສັນຍານ ລາຍການໂທລະພາບ ແລະ ລາຍການວິທະຍຸ ຜ່ານສາຍໂກອັກຊຽນ ໄປຫາເປົ້າໝາຍ ຜູ້ຊົມ ແລະ ຜູ້ຟັງ ທີ່ມີໜ່ວຍໂທລະພາບ.

### ມາດຕາ 9 ໂທລະພາບຜ່ານສາຍໄຍແກ້ວນຳແສງ

ໂທລະພາບຜ່ານສາຍໄຍແກ້ວນຳແສງ ແມ່ນລະບົບການສົ່ງສັນຍານລາຍການ ໂທລະພາບ ແລະ ລາຍການວິທະຍຸ ໂດຍຜ່ານສາຍໄຍແກ້ວທີ່ມີຄວາມໄວສູງ (Fiber optic)ໄປຫາເປົ້າໝາຍ ຜູ້ຊົມ ແລະ ຜູ້ຟັງທີ່ມີໜ່ວຍໂທລະພາບ.

ການສົ່ງສັນຍານທາງສາຍໄຍແກ້ວໄດ້ເພີ່ມຄວາມສາມາດໃນການຮັບສັນຍານພາບໃຫ້ດີຍິ່ງຂຶ້ນ ໂດຍການສົ່ງມີ 2 ລະບົບຄື: ລະບົບ Evan ແລະ ລະບົບ IP.

**ມາດຕາ 10 ໂທລະພາບຜ່ານອິນເຕີເນັດ**

ໂທລະພາບຜ່ານອິນເຕີເນັດ ແມ່ນການສົ່ງສັນຍານ ພາບ-ສຽງຂອງ ລາຍການໂທລະພາບ, ວິທະຍຸ ຜ່ານລະບົບເຄືອຂ່າຍອິນເຕີເນັດ ສາມາດຜ່ານທາງສາຍ ແລະ ທາງອາກາດ ໄປຫາເປົ້າໝາຍ ຜູ້ຊົມ ແລະ ຜູ້ຟັງ ທີ່ມີອຸປະກອນຮັບສັນຍານ ເປັນຕົ້ນ ຄອມພິວເຕີ ແລະ ອຸປະກອນສື່ສານອື່ນ ໂດຍນຳໃຊ້ ແອບປລິເຄເຊິນ ຕ່າງໆ.

**ມາດຕາ 11 ໂທລະພາບກະຈາຍພາກພື້ນດິນດ້ວຍລະບົບດີຈິຕອນ**

ໂທລະພາບກະຈາຍພາກພື້ນດິນດ້ວຍລະບົບດີຈິຕອນ ແມ່ນການສົ່ງສັນຍານລາຍການ ໂທລະພາບ ແລະ ລາຍການວິທະຍຸ ດ້ວຍລະບົບເຄື່ອງສົ່ງດີຈິຕອນທາງໜ້າດິນ ໄປຫາເປົ້າໝາຍ ຜູ້ຊົມ ແລະ ຜູ້ຟັງ ທີ່ມີອຸປະກອນຮັບສັນຍານປະກອບດ້ວຍ ກ່ອງຮັບສັນຍານ ແລະ ໜ່ວຍໂທລະພາບ.

ການກະຈາຍສັນຍານລະບົບດີຈິຕອນ ແມ່ນ ສັນຍານອານາລັອກ ໄດ້ຖືກເຂົ້າລະຫັດທີ່ມີຄ່າເປັນ " 0 " ຫຼື " 1 " ເຊິ່ງເຮັດໃຫ້ຄື້ນຄວາມຖີ່ໜຶ່ງ ສາມາດສົ່ງລາຍການໂທລະພາບໄດ້ຫຼາຍຊ່ອງ ແລະ ຄຸນນະພາບຂອງ ພາບ-ສຽງ ມີຄວາມຊັດເຈນ.

**ມາດຕາ 12 ໂທລະພາບຜ່ານດາວທຽມ**

ໂທລະພາບຜ່ານດາວທຽມ (ໃນພາສາອັງກິດເອີ້ນວ່າ Satellite Television) ແມ່ນການຮັບ-ກະຈາຍ ລາຍການໂທລະພາບຜ່ານດາວທຽມໄປຫາເປົ້າໝາຍ ຜູ້ຊົມ ແລະ ຜູ້ຟັງ ທີ່ມີອຸປະກອນເຄື່ອງຮັບສັນຍານວິທະຍຸ.ໂທລະພາບຜ່ານດາວທຽມ ຊຶ່ງອຸປະກອນດັ່ງກ່າວປະກອບມີ: ຈານຮັບສັນຍານ, ກ່ອງຮັບສັນຍານ (SetTop Box) ອຸປະກອນເສີມອື່ນໆ ທີ່ກ່ຽວຂ້ອງ ແລະ ໜ່ວຍໂທລະພາບ.

**ມາດຕາ 13 ການຈັດຜັງຊ່ອງລາຍການ**

ຜັງຊ່ອງລາຍການ ແມ່ນເອກະສານການຈັດລຽງ ຊ່ອງ ແລະ ຄື້ນ ລາຍການ ໂທລະພາບ ແລະ ລາຍການວິທະຍຸ ຕາມລຳດັບຄວາມສຳຄັນຂອງ ກຸ່ມປະເທດ ແລະ ປະເພດລາຍການ.

ຂໍ້ຕົກລົງສະບັບນີ້ໄດ້ກຳນົດຫຼັກການ ຈັດລຽງຊ່ອງໂທລະພາບ ແລະ ຄື້ນວິທະຍຸກະຈາຍສຽງເປັນກຸ່ມຕາມລຳດັບ ດັ່ງນີ້: 1)ກຸ່ມຊ່ອງຂອງລາວທີ່ຕັ້ງຢູ່ສູນກາງ ແລະ ທ້ອງຖິ່ນ ລວມທັງຊ່ອງທີ່ເປັນຂອງ ລັດ ແລະ ເອກະຊົນ; 2) ກຸ່ມຊ່ອງເພື່ອເດັກ; 3)ກຸ່ມຊ່ອງສາລະ-ຄວາມຮູ້; 4) ກຸ່ມຊ່ອງຂອງປະເທດໃກ້ຄຽງ; 5)ກຸ່ມຊ່ອງຂ່າວ; 6)ກຸ່ມຊ່ອງກິລາ; 7)ກຸ່ມຊ່ອງຮູບເງົາ; 8)ກຸ່ມຊ່ອງສິລະປະ ແລະ ບັນເທີງ; 9)ກຸ່ມຄື້ນລາຍການວິທະຍຸ.

## ໝວດທີ 3
## ການຄຸ້ມຄອງ ແລະ ນຳໃຊ້ ຊ່ອງ ແລະ ຄື້ນ ລາຍການ

**ມາດຕາ 14 ການນຳເຂົ້າ ຊ່ອງລາຍການ**

ຜູ້ປະກອບກິດຈະການ ທີ່ຈະນຳເຂົ້າຊ່ອງ ຫຼື ຄື້ນ ລາຍການໂທລະພາບ ແລະ ວິທະຍຸ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນລະບົບການບໍລິການຂອງສະຖານີຂອງຕົນ ຕ້ອງໄດ້ຮັບການເຫັນດີ ແລະ

ຢັ້ງຢືນຈາກເຈົ້າຂອງຊ່ອງລາຍການ ແລະ ໄດ້ຮັບການເຫັນດີຈາກອົງການຄຸ້ມຄອງວຽກງານສື່ມວນຊົນທີ່ກ່ຽວຂ້ອງ.

**ມາດຕາ 15 ຂັ້ນຕອນການນຳໃຊ້ຊ່ອງ ຫຼື ຄື້ນ ລາຍການ**

ຜູ້ປະກອບກິດຈະການຕ້ອງການນຳໃຊ້ ຊ່ອງ ຫຼື ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸໃດໜຶ່ງ ຕ້ອງປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ຕ້ອງມີໃບອະນຸຍາດນຳໃຊ້ ຊ່ອງ ແລະ ຄື້ນຈາກຜູ້ເປັນເຈົ້າຂອງ;
2. ເຮັດໜັງສືສະເໜີ ພ້ອມໃບອະນຸຍາດນຳໃຊ້ ຊ່ອງ ແລະ ຄື້ນ ຈາກຜູ້ເປັນເຈົ້າຂອງ, ຮ່າງຜັງຊ່ອງລາຍການ ແລ້ວ ສົ່ງເຖິງອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ອອກໃບຂໍອະນຸຍາດນຳໃຊ້;
3. ການພິຈາລະນາອອກໃບອະນຸຍາດໃຊ້ເວລາ ສິບຫ້າວັນ ນັບແຕ່ມື້ໄດ້ຮັບໜັງສືສະເໜີ.

**ມາດຕາ 16 ການຄຸ້ມຄອງຊ່ອງລາຍການ**

ການຄຸ້ມຄອງຊ່ອງລາຍການ ແມ່ນການຊຸກຍູ້ ສົ່ງເສີມ ຕິດຕາມກວດກາ ແລະ ການໃຊ້ມາດຕະການຕໍ່ ເນື້ອໃນລາຍການ ແລະ ຮູບການ ຂອງ ຊ່ອງ ແລະ ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸ ທີ່ເຜີຍແຜ່ໃນ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ເພື່ອຮັບປະກັນຫຼັກການເຄື່ອນໄຫວຂອງສື່ມວນຊົນທີ່ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍວ່າດ້ວຍສື່ມວນຊົນ ໂດຍອົງການຄຸ້ມຄອງສື່ມວນຊົນ ແຕ່ລະຂັ້ນເປັນຜູ້ປະຕິບັດສິດໜ້າທີ່ ດັ່ງທີ່ໄດ້ກຳນົດໄວ້ ໃນ ມາດຕາ 35, 36, 37 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17 ການສົ່ງ ແລະ ກະຈາຍ ຊ່ອງ ແລະ ຄື້ນ ລາຍການ.**

ຜູ້ປະກອບກິດຈະການສາມາດ ສົ່ງ ແລະ ກະຈາຍ ສັນຍານ ຊ່ອງ ແລະ ຄື້ນ ເປັນພາບ ແລະ ສຽງຕາມຜັງຊ່ອງລາຍການ ທີ່ໄດ້ຮັບອະນຸຍາດ.

ໃນກໍລະນີ ຜູ້ປະກອບກິດຈະການມີຈຸດປະສົງປັບປຸງ ເພີ່ມ, ຫຼຸດ ຈຳນວນຊ່ອງ ແລະ ຄື້ນ ຈຳນວນລາຍການໂທລະພາບ ແລະ ລາຍການວິທະຍຸ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

**ມາດຕາ 18 ການຖ່າຍທອດສັນຍານລາຍການພິເສດ.**

ການຖ່າຍທອດລາຍການພິເສດໄດ້ກຳນົດລະບຽບການ ດັ່ງນີ້:

1. ໃນກໍລະນີ ລາຍການພິເສດ ຖືກ ສົ່ງເຂົ້າ ໃນຊ່ອງປົກກະຕິຕາມຜັງຊ່ອງລາຍການທີ່ໄດ້ຮັບອະນຸຍາດ, ຜູ້ປະກອບກິດຈະການສາມາດ ສົ່ງ ຫຼື ກະຈາຍລາຍການນັ້ນໄດ້ ຕາມປົກກະຕິ.
2. ຜູ້ປະກອບກິດຈະການ ມີສິດ ໄດ້ຮັບ ການແບ່ງປັນສິດກ່ຽວກັບລິຂະສິດ ໃນການຖ່າຍທອດລາຍການພິເສດ;

## ໝວດທີ 4
## ການສ້າງຕັ້ງທຸລະກິດບໍລິການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ

### ມາດຕາ 19 ທຸລະກິດໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ

ທຸລະກິດໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ແມ່ນການບໍລິການ ຫຼື ສະໜອງ ຊ່ອງ, ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸ ພາຍໃນ ແລະ ຕ່າງປະເທດໃຫ້ແກ່ຜູ້ເປັນສະມາຊິກ.

### ມາດຕາ 20 ການຂໍອະນຸຍາດສ້າງຕັ້ງດຳເນີນທຸລະກິດ

ບຸກຄົນ, ນິຕິບຸກຄົນ, ແລະ ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງດຳເນີນທຸລະກິດບໍລິການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຕ້ອງຍື່ນເອກະສານສະເໜີ ເຖິງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພິຈາລະນາ ຊຶ່ງຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

1. ໃບສະເໜີ ຂໍອະນຸຍາດສ້າງຕັ້ງສະຖານີ ແລະ ດຳເນີນທຸລະກິດ;
2. ບົດວິພາກເສດຖະກິດ-ເຕັກນິກ ເຊິ່ງປະກອບມີ: ຈຸດປະສົງ, ເປົ້າໝາຍ, ການຈັດຕັ້ງ ແລະ ບຸກຄະລາກອນ, ພາຫະນະອຸປກອນເຕັກນິກ; ທຶນ, ທີ່ດິນ;
3. ໃບຢັ້ງຢືນການຈັດຕັ້ງ ແລະ ໃບທະບຽນວິສາຫະກິດ;
4. ຮ່າງກົດລະບຽບບໍລິສັດ ແລະ ສະຖານີ;
5. ເອກະສານຢັ້ງຢືນຄວາມຮູ້ ແລະ ວິຊາສະເພາະດ້ານຖະແຫຼງຂ່າວ-ສື່ມວນຊົນ ແລະ ດ້ານອື່ນໆ ຂອງ ຜູ້ປະກອບກິດຈະການ ແລະ ຈຳນວນພະນັກງານວິຊາການ;
6. ຊີວະປະຫວັດຫຍໍ້, ໃບຢັ້ງຢືນທີ່ຢູ່ຜູ້ປະກອບກິດຈະການ ແລະ ພະນັກງານວິຊາການ;
7. ໃບຢັ້ງຢືນ ເຫັນດີຂອງອົງການການປົກຄອງທ້ອງຖິ່ນ(ບ້ານ, ເມືອງ, ແຂວງ) ຕໍ່ການສ້າງຕັ້ງ;
8. ໃບຢັ້ງຢືນບັນຊີເງິນຝາກໃນທະນາຄານຂອງ ສປປລາວ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 21 ມາດຕະຖານເຕັກນິກ

ສະຖານີໂທລະພາບໃຊ້ສາຍ ແລະ ສະຖານີໂທລະພາບບໍ່ໃຊ້ສາຍ ສຳລັບການກະຈາຍທາງໜ້າດິນ ຕ້ອງນຳໃຊ້ຕາມມາດຕະຖານແຫ່ງຊາດດ້ວຍລະບົບ DTMB ແລະ ມາດຕະຖານອື່ນຕາມການເຫັນດີຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ.

### ມາດຕາ 22 ຂອບເຂດ ຄື້ນຄວາມຖີ່ ກຳລັງແຮງສົ່ງ ແລະ ລັດສະໝີສາຍສົ່ງ

ຄື້ນຄວາມຖີ່ ທີ່ນຳໃຊ້ບໍລິການຂອງສະຖານີ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ແມ່ນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຈັດສັນ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ອະນຸຍາດນຳໃຊ້.

ກຳລັງແຮງສົ່ງ ແລະ ລັດສະໝີສາຍສົ່ງ ຂອງສະຖານີໜຶ່ງໄດ້ແບ່ງຕາມຂັ້ນ ດັ່ງນີ້:

1. ໂທລະພາບດີຈີຕອນພາກພື້ນດິນ ລະດັບຊາດ ແລະ ລະດັບເຂດໃຊ້ກຳລັງແຮງສົ່ງບໍ່ເກີນສິບກິໂລວັດ;

2. ໂທລະພາບດີຈີຕອນພາກພື້ນດິນລະດັບແຂວງ ແລະ ນະຄອນຫຼວງໃຊ້ກຳລັງແຮງສົ່ງບໍ່ເກີນຫ້າກິໂລວັດ;

3. ໂທລະພາບດີຈີຕອນພາກພື້ນດິນ ລະດັບເມືອງ ແລະ ນະຄອນ ໃຊ້ກຳລັງແຮງສົ່ງບໍ່ເກີນ ໜຶ່ງກິໂລວັດ;

4. ໂທລະພາບໃຊ້ສາຍທົ່ວໄປ ມີລັດສະໝີສາຍສົ່ງບໍລິການບໍ່ໃຫ້ເກີນ ຫ້າສິບ ກິໂລແມັດ ຈາກຈຸດຕັ້ງຂອງສະຖານີ ແລະ ບໍ່ໃຫ້ທັບຊ້ອນກັບສະຖານີໃຊ້ສາຍອື່ນ.

**ມາດຕາ 23 ເງື່ອນໄຂການສ້າງຕັ້ງສະຖານີ ແລະ ດຳເນີນທຸລະກິດ**

ຜູ້ປະກອບກິດຈະການ ທີ່ເປັນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະດຳເນີນທຸລະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ຕ້ອງໄດ້ມີ ໃບອະນຸຍາດ ສ້າງຕັ້ງສະຖານີ ແລະ ດຳເນີນທຸລະກິດ ຈາກ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ;

2. ຕ້ອງໄດ້ມີ ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສຳລັບໂທລະພາບບໍ່ໃຊ້ສາຍ;

3. ຕ້ອງໄດ້ມີ ໃບອະນຸຍາດການລົງທຶນ ຕາມກົດໝາຍ ຂອງ ສປປ ລາວ.

**ມາດຕາ 24 ການເຄື່ອນໄຫວທຸລະກິດພາຍຫຼັງໄດ້ຮັບໃບອະນຸຍາດ**

ເມື່ອໄດ້ຮັບໃບອະນຸຍາດ ຜູ້ປະກອບກິດຈະການຕ້ອງເລີ່ມລົງມືດຳເນີນກິດຈະການຂອງຕົນພາຍໃນ 90 ວັນ ລັດຖະການ, ຖ້າກາຍວັນກຳນົດ ຕ້ອງລາຍງານຢ່າງເປັນທາງການໃຫ້ອົງການຄຸ້ມຄອງສື່ມວນຊົນ. ໃນກໍລະນີບໍ່ດຳເນີນກິດຈະການພາຍໃນວັນທີໄດ້ກຳນົດໄວ້ ອົງການຄຸ້ມຄອງສື່ມວນຊົນ ຈະຖອນໃບອະນຸຍາດ ແລະ ອອກແຈ້ງການໂຈະກິດຈະການ.

## ໝວດທີ 5
## ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖານີ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ

**ມາດຕາ 25 ໂຄງປະກອບການຈັດຕັ້ງ**

ການຈັດຕັ້ງຂອງ ສະຖານີ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍປະກອບດ້ວຍ:

1. ສະພາບໍລິຫານ;
2. ຄະນະອຳນວຍການ;

ສະພາບໍລິຫານ ປະກອບມີຜູ້ປະກອບກິດຈະການ, ຜູ້ຕາງໜ້າການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນໆທີ່ກ່ຽວຂ້ອງເຂົ້າຮ່ວມເປັນສະມາຊິກ.

ຄະນະອໍານວຍການປະກອບມີ ຜູ້ອໍານວຍການ, ຮອງຜູ້ອໍານວຍການ ທີ່ມີເງື່ອນໄຂ ດັ່ງທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສື່ມວນຊົນ(ສະບັບປັບປຸງ). ໃນນີ້, ຮອງຜູ້ອໍານວຍການຜູ້ໜຶ່ງຕ້ອງມາຈາກອົງການຄຸ້ມຄອງສື່ມວນຊົນ(ພາກລັດ).

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕັດສິນ ແລະ ກໍານົດ ດ້ານກົງຈັກການຈັດຕັ້ງ ແລະ ພະນັກງານ, ຊັບສິນ, ເປົ້າໝາຍການເຄື່ອນໄຫວຂອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນແຕ່ລະໄລຍະ.
2. ຂະຫຍາຍສາຂາ ບໍລິການໄປສູ່ພື້ນທີ່ໃໝ່;
3. ສະເໜີ ອົງການຄຸ້ມຄອງສື່ມວນຊົນ ເພື່ອຜະລິດລາຍການເຂົ້າໃສ່ຊ່ອງໂທລະພາບຂອງຕົນ;
4. ນໍາເຂົ້າ ພາຫະນະ, ອຸປະກອນ ທີ່ກ່ຽວຂ້ອງກັບກິດຈະການຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
5. ປະກອບຄໍາເຫັນ ແລະ ເຂົ້າຮ່ວມກອງປະຊຸມດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງອົງການຄຸ້ມຄອງສື່ມວນຊົນ;
6. ສະເໜີສະພາບໍລິຫານແຕ່ງຕັ້ງ ແລະ ປົດຕໍາແໜ່ງ ຜູ້ອໍານວຍການ ແລະ ຮອງຜູ້ອໍານວຍການ;
7. ຊື້, ສົມທົບກັບພາກສ່ວນອື່ນ ຊື້ ລາຍການພິເສດ ເພື່ອມາບໍລິການຜູ້ຊົມຂອງຕົນ;
8. ໄດ້ຮັບການຈັດແບ່ງປັນດ້ານຜົນປະໂຫຍດ, ເງິນເດືອນ ແລະ ອື່ນໆ ຕາມລະບຽບການ;
9. ໄດ້ຮັບການຄຸ້ມຄອງ, ຈາກລັດ ຕາມສັນຍາ ແລະ ກົດໝາຍຂອງ ສປປລາວ;
10. ຄວບຄຸມການປະຕິບັດໜ້າທີ່ວິຊາສະເພາະ, ການບໍລິການສັງຄົມຕາມ ພາລະບົດບາດ, ຈຸດປະສົງ, ຄາດໝາຍ, ຂອບເຂດ ການບໍລິການຂອງສະຖານີ ທີ່ໄດ້ກໍານົດໄວ້ໃນໃບອະນຸຍາດ ແລະ ບົດວິພາກ;
11. ຕິດຕາມກວດກາ ຄຸນນະພາບ, ຄວາມປອດໄພ ດ້ານເນື້ອໃນ ແລະ ເຕັກນິກ ບໍ່ສ້າງຄວາມລໍາຄານ ແລະ ມີຜົນກະທົບ ຫຼື ມີຄວາມສ່ຽງຕໍ່ສຸຂະພາບ ຈິດ ແລະ ກາຍ ຂອງຜູ້ຊົມ ແລະ ຜູ້ຟັງ;
12. ນໍາພາດໍາເນີນກອງປະຊຸມສະພາບໍລິຫານ ໜຶ່ງຄັ້ງຕໍ່ປີ ແລະ ລາຍງານການເຄື່ອນໄຫວ ຂອງອົງການຈັດຕັ້ງຂອງຕົນໃຫ້ແກ່ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຜູ້ອໍານວຍການ**

ຜູ້ອໍານວຍການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີຕໍ່ສະພາບໍລິຫານ ຫຼື ຜູ້ປະກອບກິດຈະການເພື່ອບັນຈຸ, ປົດ ແລະ ຊັບຊ້ອນນັກວິຊາການ;
2. ປະກອບຄໍາເຫັນ ແລະ ເຂົ້າຮ່ວມກອງປະຊຸມດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງສະພາບໍລິຫານ ຫຼື ຜູ້ປະກອບກິດຈະການ;
3. ໄດ້ຮັບຄ່າຕອບແທນ ເປັນເງິນເດືອນ ຕາມລະບຽບການ;
4. ນໍາໃຊ້ສິດອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.
5. ບໍລິຫານ, ນໍາພາ ແລະ ຄຸ້ມຄອງການເຄື່ອນໄຫວຂອງສະຖານີ ໃຫ້ມີປະສິດທິພາບສູງສຸດ;
6. ຮັບຜິດຊອບຕໍ່ ສະພາບໍລິຫານ ຫຼື ຜູ້ປະກອບກິດຈະການ ໃນການຄຸ້ມຄອງ, ຊີ້ນໍາ, ນໍາພາການເຄື່ອນໄຫວ ຂອງສະຖານີ;

7. ກວດກາເນື້ອໃນ ແລະ ຮູບການຂອງຊ່ອງໂທລະພາບ, ຄື້ນວິທະຍຸກະຈາຍສຽງ, ລາຍການໂທລະພາບ ຫຼື ລາຍການວິທະຍຸ ທີ່ຢູ່ພາຍໃຕ້ການຄວບຄຸມຂອງຕົນ;

8. ຄຸ້ມຄອງ, ບຳລຸງສ້າງ ບຸກຄະລາກອນ, ຊັບສິນ ແລະ ພື້ນຖານວັດຖຸເຕັກນິກ;

9. ກຳກັບ ການຕໍ່ອາຍຸໃບອະນຸຍາດ, ສິ່ງບົດລາຍງານການເຄື່ອນໄຫວປະຈຳປີ, ຜັງຊ່ອງລາຍການ, ຈຳນວນຜູ້ຊົມ, ຄ່າບໍລິການ ແລະ ອື່ນໆ ໃຫ້ອົງການຄຸ້ມຄອງສື່ມວນຊົນເພື່ອເປັນບ່ອນອີງໃນການພິຈາລະນາຕໍ່ອາຍຸໃບອະນຸຍາດ;

10. ກຳກັບ ການເສຍຄ່າທຳນຽມ ຊ່ອງລາຍການ, ນຳໃຊ້ຄື້ນຖີ່ການກະຈາຍ ແລະ ຄ່າບໍລິການອື່ນ ຕາມລະບຽບການ ທີ່ໄດ້ກຳນົດອອກແຕ່ລະໄລຍະ;

11. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຮອງຜູ້ອຳນວຍການ**

ຮອງຜູ້ອຳນວຍການມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຜູ້ອຳນວຍການຊີ້ນຳ, ນຳພາ ແລະ ຄຸ້ມຄອງການເຄື່ອນໄຫວຂອງການຈັດຕັ້ງຂອງຕົນ;

2. ປະກອບຄຳເຫັນ, ເຂົ້າຮ່ວມກອງປະຊຸມດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງສະພາບໍລິຫານ ຫຼື ຜູ້ປະກອບກິດຈະການ, ໄດ້ຮັບນະໂຍບາຍຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

3. ໄດ້ຮັບຄ່າຕອບແທນ ເປັນເງິນເດືອນ ຕາມລະບຽບການ;

4. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

5. ຮັບຜິດຊອບຊີ້ນຳວຽກງານໃດໜຶ່ງເປັນປະຈຳຕາມການມອບໝາຍຂອງຜູ້ອຳນວຍການ;

6. ຮັກສາການແທນໃນເວລາຜູ້ອຳນວຍການບໍ່ຢູ່ ຕາມການມອບໝາຍຂອງຜູ້ອຳນວຍການ;

7. ປະກອບຄຳເຫັນ ແລະ ເຂົ້າຮ່ວມກອງປະຊຸມດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງສະພາບໍລິຫານ ຫຼື ຜູ້ປະກອບກິດຈະການ;

8. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງນັກວິຊາການ**

ນັກວິຊາການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບຕຳແໜ່ງງານ ແລະ ມອບໝາຍວຽກຕາມຄວາມຮູ້ ແລະ ຄວາມສາມາດ;
2. ປະກອບຄຳເຫັນຕໍ່ວຽກງານ ແລະ ການຈັດຕັ້ງບ່ອນຕົນສັງກັດ;
3. ໄດ້ຮັບການບຳລຸງ, ຍົກລະດັບດ້ານການເມືອງ ແລະ ວິຊາສະເພາະ;
4. ໄດ້ຮັບຄ່າຕອບແທນ ເປັນເງິນເດືອນ, ນະໂຍບາຍອື່ນ ແລະ ໄດ້ຮັບການປົກປ້ອງຕາມກົດໝາຍ;
5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ປະຕິບັດໜ້າທີ່ຕາມອົງການໄດ້ມອບໝາຍໃຫ້ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
7. ຮັກສາ ແລະ ປົກປ້ອງຜົນປະໂຫຍດ, ກຽດສັກສີຂອງອົງການຕົນ;
8. ປະຕິບັດຈັນຍາບັນຂອງນັກຂ່າວລາວ ແລະ ລະບຽບວິໄນຢ່າງເຂັ້ມງວດ;
9. ເສຍອາກອນລາຍໄດ້ຕາມກົດໝາຍ ແລະ ລະບຽບການ;
10. ສະຫຼຸບລາຍງານການປະຕິບັດວຽກງານຂອງຕົນຕໍ່ອົງການຢ່າງເປັນປົກກະຕິ.

**ມາດຕາ 30 ການຂະຫຍາຍສາຂາ**

ຜູ້ປະກອບກິດຈະການມີຈຸດປະສົງຂະຫຍາຍສາຂາໄປ ຕັ້ງຢູ່ ແຂວງ, ເມືອງອື່ນ ຕ້ອງໄດ້ປະກອບເອກະສານຂໍອະນຸຍາດສ້າງຕັ້ງ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 31 ໂອນກຳມະສິດໃຫ້ບຸກຄົນອື່ນ**

ຜູ້ປະກອບກິດຈະການມີຈຸດປະສົງໂອນກິດຈະການໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງໄດ້ປະກອບເອກະສານສະເໜີ ແລະ ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງສື່ມວນຊົນຈຶ່ງດຳເນີນການໄດ້.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 32 ຂໍ້ຫ້າມສຳລັບ ຜູ້ປະກອບກິດຈະການ**

ຫ້າມຜູ້ປະກອບກິດຈະການ ມີພຶດຕິກຳ ດັ່ງນີ້:

1. ຂາຍ ຫຼື ໂອນກິດຈະການໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນ.

2. ສົ່ງ ແລະ ກະຈາຍ ສັນຍານ ຊ່ອງ ແລະ ຄື້ນ ລາຍການໂທລະພາບ, ວິທະຍຸ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ເປັນເຈົ້າຂອງ ແລະ ອົງການຄຸ້ມຄອງທີ່ກ່ຽວຂ້ອງ;

3. ສົ່ງ ແລະ ກະຈາຍ ພາບ ແລະ ສຽງ ລາມົກອານາຈານ, ໃຊ້ຄວາມຮຸນແຮງ, ສໍ່ໄປທາງມ້າງເພຄວາມສາມັກຄີ, ສ້າງຄວາມປັ່ນປ່ວນທີ່ພາໃຫ້ເກີດຄວາມອາຄາດບາດໝາງ, ກຽດຊັງ ລະຫວ່າງ ຊົນເຜົ່າ ແລະ ສັງຄົມພາຍໃນຊາດ;

4. ປ່ຽນແປງ ຄື້ນຄວາມຖີ່ ແລະ ກຳລັງແຮງສົ່ງ ໃນການບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ;

5. ດຳເນີນການໃດທີ່ລະເມີດກັບຂໍ້ຫ້າມອື່ນ ຂອງ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

**ມາດຕາ 33 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ອື່ນ ຮັບຊື້, ຮັບສຳປະທານ ສ່ວນໃດໜຶ່ງ ຫຼື ທັງໝົດກິດຈະການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຈາກຜູ້ເປັນເຈົ້າຂອງກິດການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ;

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ໂທລະພາບໃຊ້ສາຍ ແລະ ບໍ່ໃຊ້ສາຍ

**ມາດຕາ 34 ອົງການຄຸ້ມຄອງ**

ອົງການຄຸ້ມຄອງໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ປະກອບມີ ດັ່ງນີ້:

1. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ , ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ກົມສື່ມວນຊົນ ເປັນເສນາທິການໃຫ້ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ການສະເໜີຂໍອະນຸຍາດການດຳເນີນທຸລະກິດ, ການໂຈະ, ການຍຸບເລີກ ກິດຈະການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ແລະ ສະເໜີຕໍ່ລັດຖະມົນຕີກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ພິຈາລະນາຕົກລົງ;
2. ຊຸກຍູ້, ຕິດຕາມ, ກວດກາ ການຄຸ້ມຄອງ ກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນທົ່ວປະເທດ ຕາມກົດໝາຍ;
3. ອອກໃບອະນຸຍາດຜັງຊ່ອງລາຍການ ໂທລະພາບ ແລະ ວິທະຍຸ ໃຫ້ແກ່ສະຖານີ;
4. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່ານໍ້າໃຊ້ຊ່ອງ ແລະ ຄື້ນ ລາຍການໂທລະພາບ ແລະ ລາຍການວິທະຍຸ ຂອງຜູ້ປະກອບກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ລະດັບຊາດ ຕາມກົດໝາຍ ແລະ ລະບຽບການ;
5. ປັບໄໝຜູ້ລະເມີດຂໍ້ຫ້າມຂອງຂໍ້ຕົກລົງສະບັບນີ້ ຕາມຂອບເຂດການຄຸ້ມຄອງ, ສິດໜ້າທີ່ ແລະ ລະບຽບການ;
6. ອອກໜັງສື ອະນຸຍາດ, ແຈ້ງການ, ແນະນຳ, ເຕືອນ ກ່ຽວກັບກິດຈະການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃນຂອບເຂດທົ່ວປະເທດ ຕາມການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
7. ສັງລວມສະຖິຕິການຊົມໃນຂອບເຂດ ທົ່ວປະເທດໃນທ້າຍເດືອນພະຈິກ ຂອງແຕ່ລະປີ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ພະແນກ ແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂອງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາ ການຄຸ້ມຄອງ ກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ພາຍໃນເມືອງຕ່າງໆ ຂອງແຂວງຕົນ;
2. ຕິດຕາມ ແລະ ກວດກາ ຊ່ອງລາຍການ ທີ່ໃຫ້ບໍລິການຕາມ ໂຮງແຮມ, ຮ້ານອາຫານ ແລະ ສະຖານທີ່ສາທາລະນະ ທີ່ຂຶ້ນກັບ ແຂວງ, ນະຄອນຫຼວງ;

3. ລາຍງານລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຜ່ານກົມສື່ມວນຊົນ ເພື່ອ ໂຈະ, ຍຸບເລີກ ກິດຈະການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ທີ່ບໍ່ເຄື່ອນໄຫວຕາມເນື້ອໃນ, ເປົ້າໝາຍ ທີ່ໄດ້ອະນຸຍາດ;

4. ສະເໜີຂໍປັບປຸງຜັງຊ່ອງລາຍການ ເພື່ອໃຫ້ແທດເໝາະກັບສະພາບແວດລ້ອມຂອງ ເມືອງ, ແຂວງ;

5. ເກັບຄ່າຕໍ່ໃບອະນຸຍາດປະຈຳປີຈາກຜູ້ດຳເນີນກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍລະດັບທ້ອງຖິ່ນ ທີ່ຂຶ້ນກັບການຄຸ້ມຄອງຂອງແຂວງ, ເກັບຄ່າທຳນຽມ, ຄ່າບໍລິການ, ອຸປະກອນຮັບສັນຍານໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຈາກຫົວໜ່ວຍທຸລະກິດທີ່ນຳເຂົ້າພາຍໃນແຂວງ ຕາມກົດໝາຍ ຂອງ ສປປ ລາວ;

6. ປັບໄໝ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຫ້າມ ຂອງຂໍ້ຕົກລົງສະບັບນີ້ ຕາມຂອບເຂດ ການຄຸ້ມຄອງ, ສິດໜ້າທີ່ ແລະ ລະບຽບການ;

7. ເກັບກຳສະຖິຕິຜູ້ຊົມໃນຂອບເຂດຄວາມຮັບຜິດຊອບ ແລະ ສະຫຼຸບລາຍງານໃຫ້ກົມສື່ມວນຊົນກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ອນວັນທີ 30 ຕຸລາ ຂອງແຕ່ລະປີ.

**ມາດຕາ 37 ສິດ ແລະ ໜ້າທີ່ຂອງ ຫ້ອງການຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ**

ຫ້ອງການແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂອງເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາ, ຄວບຄຸມ ການເຄື່ອນໄຫວ ແລະ ການບໍລິການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຕາມກົດໝາຍ ແລະ ລະບຽບການ;

2. ຕິດຕາມກວດກາ ຊ່ອງລາຍການ ທີ່ໃຫ້ບໍລິການຕາມ ເຮືອນພັກ, ສະຖານທີ່ສາທາລະນະ ທີ່ຂຶ້ນກັບເມືອງ, ນະຄອນ;

3. ລາຍງານພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເພື່ອ ໂຈະ , ຍຸບເລີກ ກິດຈະການ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ທີ່ເຄື່ອນໄຫວບໍ່ໄປຕາມເນື້ອໃນ, ເປົ້າໝາຍ ທີ່ໄດ້ອະນຸຍາດ;

4. ເກັບຄ່າ ທຳນຽມ ແລະ ບໍລິການ ຕາມການມອບໝາຍຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ຕາມກົດໝາຍ ແລະ ລະບຽບການ;

5. ປັບໄໝ ແລະ ໃຊ້ຕາມມາດຕະການຕໍ່ຜູ້ລະເມີດຂໍ້ຫ້າມ ຂອງຂໍ້ຕົກລົງສະບັບນີ້ ແລະ ຕາມຂອບເຂດ ການຄຸ້ມຄອງ, ສິດໜ້າທີ່ ແລະ ລະບຽບການ;

6. ເກັບກຳສະຖິຕິຜູ້ຊົມ ແລະ ສະຫຼຸບລາຍງານວຽກງານການຄຸ້ມຄອງ ໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍໃນຄວາມຮັບຜິດຊອບຂອງເມືອງ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ກ່ອນວັນທີ 15 ຕຸລາ ຂອງແຕ່ລະປີ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ.**

ຜູ້ປະກອບກິດຈະການທີ່ປະຕິບັດຂໍ້ຕົກລົງສະບັບນີ້ໄດ້ດີຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ.**

ຜູ້ປະກອບກິດຈະການທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກ ເຕືອນ, ສຶກສາອົບຮົມ, ໂຈະ, ຖອນໃບອະນຸຍາດ, ປັບໃໝ, ຍຸບເລີກກິດຈະການ ແລະ ລົງໂທດ ຕາມກໍລະນີໜັກເບົາ ດັ່ງຕໍ່ໄປນີ້:

1. ສ້າງຄວາມປັ່ນປ່ວນແຕະຕ້ອງເຖິງຄວາມສະຫງົບສຸກ, ຄວາມສາມັກຄີພາຍໃນ ແລະ ຄວາມໝັ້ນຄົງຂອງຊາດ ຈະຖືກຍຸບເລີກການເຄື່ອນໄຫວ ແລະ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ລະບຽບການ ຂອງ ສປປລາວ.

2. ສົ່ງ ແລະ ກະຈາຍ ຂໍ້ມູນ, ຂ່າວສານລາມົກອານາຈານ, ໃຊ້ຄວາມຮຸນແຮງ ຈະຖືກສຶກສາອົບຮົມ, ແຈ້ງເຕືອນ ແລະ ປັບໃໝ ຕາມກົດໝາຍ ແລະ ລະບຽບການ;

3. ບໍ່ຕໍ່ອາຍຸໃບອະນຸຍາດ ເປັນເວລາ ໜຶ່ງປີ ຈະຖືກປັບໃໝ ຫ້າເທົ່າ ຂອງຄ່າຕໍ່ອາຍຸປົກກະຕິ;

4. ຂາຍ ຫຼື ໂອນກິດຈະການໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໄໝເປັນເງິນ ຊາວສ່ວນຮ້ອຍຂອງການລົງທຶນ ແລະ ຕ້ອງຂໍອະນຸຍາດໃໝ່ ຕາມລະບຽບການ;

5. ຄື້ນຮົ່ວໄຫຼ, ລົບກວນ ຈາກສະຖານີ ຊຶ່ງມີຄວາມສ່ຽງ ຕໍ່ ຄວາມເສຍຫາຍແກ່ສາທາລະນະ ແລະ ປະເທດຊາດ, ຜູ້ປະກອບກິດຈະການຈະຖືກໂຈະ ການສົ່ງ, ກະຈາຍສັນຍານ ແລະ ເສຍຄ່າໃຊ້ຈ່າຍໃນການກວດກາສາເຫດ ແລະ ຕ້ອງປັບປຸງ, ສ້ອມແປງ ຫຼື ປ່ຽນຖ່າຍ ອຸປະກອນເຕັກນິກເຫຼົ່ານັ້ນໃຫ້ໄດ້ຕາມມາດຕະຖານຄວາມປອດໄພ ຈຶ່ງຈະໄດ້ຮັບອະນຸຍາດໃຫ້ເປີດຄືນໃໝ່ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

6. ສົ່ງ ແລະ ກະຈາຍ ສັນຍານຊ່ອງໂທລະພາບທີ່ບໍ່ໄດ້ຮັບອະນຸຍາດ ຈາກ ເຈົ້າຂອງລິຂະສິດ ແລະ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຈະຕ້ອງຮັບຜິດຊອບຕໍ່ກົດໝາຍທາງອາຍາ ແລະ ແພ່ງ ຕາມກົດໝາຍ ແລະ ລະບຽບການພາຍໃນ ແລະ ສົນທິສັນຍາທີ່ລາວເປັນພາຄີ;

7. ປ່ຽນແປງ ຄື້ນຄວາມຖີ່ ແລະ ກຳລັງແຮງສົ່ງ ໃນການບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຈະຖືກໂຈະການກະຈາຍ;

**ມາດຕະການ ຕໍ່ບຸກຄົນອື່ນທີ່ລະເມີດ ຂໍ້ຫ້າມ ມີດັ່ງນີ້:**

1. ການ ຮັບຊື້, ຮັບສຳປະທານຕໍ່ ກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ຈາກຜູ້ປະກອບກິດຈະການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງຈະຖືກປັບໃໝເປັນເງິນ ຊາວສ່ວນຮ້ອຍ ຂອງມູນຄ່າການລົງທຶນ, ໂຈະກິດຈະການ ແລະ ຂໍອະນຸຍາດຄືນໃໝ່.

2. ການນຳເຂົ້າ, ຈຳໜ່າຍ ແລະ ແຈກຢາຍ ອຸປະກອນຮັບສັນຍານໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ພາຍໃນຂອບເຂດດິນແດນ ສປປ ລາວ ໂດຍບໍ່ໄດ້ຮັບການອະນຸຍາດ ຈະຖືກຢຶດ ແລະ ປັບໃໝ ເປັນມູນຄ່າ ຫ້າພັນກີບ ຕໍ່ໜຶ່ງຫົວໜ່ວຍ;

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 40 ການຈັດຕັ້ງປະຕິບັດ

ກະຊວງ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ມອບໃຫ້ ກົມສື່ມວນຊົນ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 41 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກ່ວາຈະມີການປ່ຽນແປງໃໝ່.

ຂໍ້ກຳນົດ, ກົດລະບຽບ, ຂໍ້ຕົກລົງ ແລະ ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ສວນສະຫວັນ ວິຍະເກດ